ບໍລິສັດ ດັກລັກຣັບເບີ ຈຳກັດ

**(DAKLAORUCO)**

# ບົດບັນທຶກກອງປະຊຸມປຶກສາຫາລື
# ແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ

## I. ເນື້ອໃນລວມ

ເພື່ອຮັບປະກັນການເຜີຍແຜ່ວຽກງານການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການຢັ້ງຢືນປ່າໄມ້ FSC FM, ບໍລິສັດ ດັກລັກຣັບເບີ ຈຳກັດ (Daklaoruco) ໄດ້ຈັດກອງປະຊຸມປຶກສາຫາລືກັບບັນດາພາກສ່ວນທີ່ກ່ຽວຂ້ອງກ່ຽວກັບ "ແຜນການພັດທະນາຄຸ້ມຄອງປ່າໄມ້ແບບຍືນຍົງ ຂອງບໍລິສັດໃນໄລຍະເວລາ 2024-2043".

1. ເວລາ: ແຕ່ 8:00 ຮອດ 17:00, ວັນທີ 11 ເດືອນ 01 ປີ 2024
2. ສະຖານທີ່: ນະຄອນປາກເຊ, ແຂວງຈຳປາສັກ, ສປປ ລາວ.
3. ພາກສ່ວນເຂົ້າຮ່ວມ: ມີທັງໝົດ 72 ຄົນ (ຊາຍ 54 ຄົນ, ຍິງ 18 ຄົນ).
   - ບໍລິສັດ DRI: ປະທານສະພາບໍລິຫານ ແລະ ຜູ້ອຳນວຍການໃຫ່ຍບໍລິສັດ
   - ບໍລິສັດ Daklaoruco: ຄະນະອຳນວຍການ: ຫົວໜ້າ ແລະ ຮອງຫົວໜ້າຫ້ອງການຂອງບໍລິສັດ, ຫົວໜ້າໜ່ວຍງານທີ່ຂື້ນກັບຕະຫຼອດຮອດພະນັກງານຂອງບໍລິສັດ.
   - ໜ່ວຍງານທີ່ປຶກສາດ້ານວິຊາການ: ທ່ານ ດ່າວ ກົງ ຂັນ ຮອງຜູ້ອຳນວຍການສະຖາບັນ SFMI ແລະ ຊ່ຽວຊານທີ່ປຶກສາ.
   - ແຂວງຈຳປາສັກ (ຕາງໜ້າຫ້ອງວ່າການປົກຄອງແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ປ່າໄມ້, ພະແນກສ່ວຍສາອາກອນ).
   - ແຂວງສາລະວັນ (ຕາງໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ປ່າໄມ້, ພະແນກສ່ວຍສາອາກອນ).
   - ເມືອງບາຈຽງ (ຕາງຫນ້າຫ້ອງວ່າການປົກຄອງເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການກະສິກຳແລະປ່າໄມ້, ຕຳຫຼວດເມືອງ).
   - ເມືອງເລົ່າງາມ (ຕາງຫນ້າຫ້ອງວ່າການປົກຄອງເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການກະສິກຳແລະປ່າໄມ້, ສ່ວຍສາອາກອນ, ຕຳຫຼວດເມືອງ).
   - ເມືອງປະທຸມພອນ (ຕາງຫນ້າຫ້ອງວ່າການປົກຄອງເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການກະສິກຳແລະປ່າໄມ້, ສ່ວຍສາອາກອນ, ຕຳຫຼວດເມືອງ).
   - ຜູ້ຕາງໜ້າຄະນະຄຸ້ມຄອງປ່າສະຫງວນແຫ່ງຊາດດົງຫົວສາວ.
   - ອຳນາດການປົກຄອງທ້ອງຖິ່ນຂອງບ້ານ: ຕ່າງໜ້າຂອງບ້ານໃນເຂດໂຄງການຂອງບໍລິສັດ.
4. ປະທານກອງປະຊຸມ: ທ່ານ ຫງ່ວຽນ ຫວ່ຽດ ເຕື້ອງ - ປະທານບໍລິສັດ, ທ່ານ ເລ ແທັງ ເກິ່ນ - ຜູ້ອຳນວຍການໃຫ່ຍບໍລິສັດ DRI , ທ່ານ ຫງ່ວຽນ ດຶ໊ກ ແຮັ້ງ ຜູ້ອຳນວຍການບໍລິສັດ Daklaoruco.
5. ເລຂາກອງປະຊຸມ: ທ່ານນາງ ຫງວ່ຽນ ທີ້ ທ່າຍ, ຫົວໜ້າຫ້ອງການບໍລິສັດ.
6. ຈຸດປະສົງຂອງການປຶກສາຫາລື.

ເກັບກຳຄວາມເຫັນຈາກພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂ, ເພີ່ມເຕີມ ແລະ ໃຫ້ສຳເລັດແຜນການຄຸ້ມຄອງປ່າໄມ້ແບບຍືນຍົງຂອງບໍລິສັດໄລຍະ 2024 - 2043.

7. ບົດລາຍງານການນຳສະເໜີ:

**II. ເນື້ອໃນການປຶກສາຫາລື**

**1.** ກ່ຽວກັບຮູບແບບ, ໂຄງສ້າງ ແລະ ພື້ນຖານດ້ານກົດຫມາຍຂອງແຜນການ.

**2.** ເປົ້າໝາຍຂອງແຜນການ.

**3.** ພື້ນຖານເຕັກນິກການສ້າງແຜນ: ສະພາບການນຳໃຊ້ທີ່ດິນ ໃນປັດຈຸບັນ, ສະພາບປັດຈຸບັນ ຂອງຊັບພະຍາກອນປ່າໄມ້, ຊີວະນາໆພັນ, ລະບົບແຜນທີ່ ການຄຸ້ມຄອງ ຊັບພະຍາກອນປ່າໄມ້, ດ້ວຍລະບົບດິຈິຕ້ອນ, ພື້ນທີ່ປ່າທີ່ມີຄຸນຄ່າທາງ ດ້ານການອະນຸລັກສູງ (HCVF); ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ເກີດຈາກການເຄື່ອນໄຫວ ຄຸ້ມຄອງປ່າໄມ້ຂອງບໍລິສັດ.

**4.** ເນື້ອທີ່ຂໍອອກໃບຢັ້ງຢືນປ່າໄມ້.

**5.** ແຜນການປູກປ່າ: ແຜນການຂຸດຂົ້ນ ແລະ ການບໍລິໂພກຜະລິດຕະພັນ

**6.** ແຜນການປະຕິບັດເຄືອນໄຫວວຽກງານໃນໄລ 2024 – 2043.

**7.** ຜົນຂອງແຜນການເຄືອນໄຫວ.

**8.** ສະຫລຸບ: ເຫັນດີ ຫລື ບໍ່ເຫັນດີກ່ຽວກັບແຜນການພັດທະນາປ່າໄມ້ແບບຍືນຍົງຂອງບໍລິສັດ?

**III. ຜົນການປຶກສາຫາລື.**

ພາຍຫລັງທີ່ໄດ້ຮັບຟັງບົດລາຍງານ, ກອງປະຊຸມໄດ້ປຶກສາຫາລືປະກອບຄຳຄິດເຫັນເຂົ້າໃນແຜນການພັດທະນາຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ລາຍງານບັນດາຫົວຂໍ້ດັ່ງລຸ່ມນີ້:

1. ທ່ານ ດັ້ງດິ່ນ ຟຸ່ງ - ຮອງອຳນວຍການບໍລິສັດນຳສະເໜີ: ແຜນການພັດທະນາປ່າໄມແບບຍືນຍົງໄລຍະ 2024-2043.
2. ປະລິນຍາເອກ. ເລ ກວາງ ຕົ້ອນ: ນຳສະເໜີຫົວຂໍ້: ເຕັກນິກການສ້າງລະບົບແຜນທີ່ຄຸ້ມຄອງດ້ວຍເຕັກນິກ GIS
3. ປະລິນຍາເອກ: ດ່າວ ກົງ ຂັນນຳສະເໜີໃນຫົວຂໍ້: ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (EIA&SIA)

ບັນດາແຂກທີ່ເຂົ້າຮ່ວມໄດ້ປຶກສາຫາລື ແລະ ໄດ້ຕົກລົງເປັນເອກະພາບໂດຍພື້ນຖານກ່ຽວກັບເນື້ອໃນບົດລາຍງານທີ່ໄດ້ນຳສະເໜີຂອງແຜນການພັດທະນາປ່າໄມ້ແບບຍືນຍົງໄລຍະ 2024 – 2043. ລວມທັງໄດ້ປະກອບຄຳຄິດເຫັນເພື່ອໃຫ້ສຳເລັດແຜນການແມ່ນຕ້ອງໄດ້ສຸມໃສ່ເນື້ອໃນດັ່ງຕໍ່ໄປນີ້:

**1. ຄຳຄິດເຫັນຂອງຕ່າງໜ້າອຳນາດການປົກຄອງທ້ອງຖິ່ນ.**

ປະຈຸບັນ, ແມ່ນເສັ້ນທາງໄປມາພາຍໃນແມ່ນມີການຂຸດໂຊມ, ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ປະຊາຊົນທີ່ຢູ່ອາໄສ ແລະ ກຳມະກອນ ຂົດຢາງພາລາໃນ ຂະບວນການຜະລິດ ແລະ ຊີວິດປະຈຳວັນໃນເຂດນັ້ນ. ຮຽກຮ້ອງໃຫ້ ບໍລິສັດຊ່ວຍເຫລືອໃນການສ້ອມແປງເສັ້ນທາງ.

*ຕ່າງໜ້າບໍລິສັດ Daklaoruco:* ຖ້າມີເງື່ອນໄຂສະດວກ, ທາງບໍລິສັດຈະໃຫ້ການຊ່ວຍເຫລືອສ້ອມແປງເສັ້ນທາງ.

**2. ຄຳຄິດເຫັນຂອງພະແນກການ, ອົງການຈັດຕັ້ງຂັ້ນແຂວງ, ຂັ້ນເມືອງ.**

- ໃນບົດທີ I, ຫົວຂໍ້ VI. ຊີວະນາໆພັນ ແລະ ປ່າມີຄຸນຄ່າທາງດ້ານການອານຸລັກສູງ (HCVF), ຂໍ້ 4, ຂໍ້ 5, ຂໍ້ 6 ແລະ ຂໍ້ 8 ຂອງການແປແມ່ນມີບາງເນື້ອໃນບໍ່ຖືກຕ້ອງ ແລະ ບໍ່ຊັດເຈນ.

*ຕ່າງໜ້າບໍລິສັດ Daklaoruco:* ປະເພດໄມ້ດູ່ລາຍ ບໍ່ແມ່ນປະເພດຕົ້ນໄມ້ທີ່ ໃກ້ຈະສູນພັນ ຫຼື ຫາຍາກ.

ຜູ້ ໃນແຜນ (ສະບັບພາສາລາວ) ມີຄວາມຜິດພາດໃນການແປຊື່ປະເພດພັນ.

*ຕ່າງໜ້າທາງ ສະຖາບັນການຄຸ້ມຄອງປ່າໄມ້ແບບຍືນຍົງແລະຍັ້ງຍືນປ່າໄມ້: ຢູ່ຂໍ້ 8 ກ່ຽວກັບ "ການກໍານົດຂອບເຂດເນື້ອທີ່ມີທ່າແຮງຕອບສະໜອງກົດສະນີ* 6.5.5 ກ່ຽວກັບປ່າຕົວຢ່າງຂອງລະບົບນິເວດ (10%)",ຕາມລະບຽບການຂອງ FSC ກ່ຽວກັບປ່າຕົວຢ່າງຂອງລະບົບນິເວດ, ຈຸດປະສົງເພື່ອຟື້ນຟູໃນບາງພື້ນທີ່, ອານຸລັກປ່າຕົວຢ່າງຂອງລະບົບນິເວດທາງທໍາມະຊາດໃນເຂດທ້ອງຖິ່ນ. ການພັດທະນາຫລືການສືບທອດອາດຈະໃຊ້ເວລາດົນນານ (ເປັນຮ້ອຍປີ). ພື້ນທີ່ນີ້ບໍ່ຖອນຕັດ, ປູກໃໝ່.

- ໃນໄລຍະຜ່ານມາປະກົດການຂີ້ລັກຢາງພາລາຂອງບໍລິສັດແມ່ນຂ້ອນຂ້າງພົບຄວາມຫຍຸ້ງຍາກຫລາຍສົມຄວນ. ສະເໜີໃຫ້ທາງບໍລິສັດເຮັດບົດລາຍງານລະອຽດສົ່ງໃຫ້ໜ່ວຍງານທີ່ກ່ຽວຂ້ອງແລະຈັດຕັ້ງກອງປະຊຸມກັບພາກສ່ວນທີ່ກ່ຽວຂ້ອງກັບສະພາບການ ແລະ ມາດຕະການແກ້ໄຂ. ແຈ້ງການປະກາດຮັບສະໝັກຂອງບໍລິສັດໄດ້ມີການປະກາດເປັນວົງກ້ວາງເຂົ້າເຖິງ ທ້ອງຖິ່ນ? ປະຊາຊົນໃນທ້ອງຖິ່ນບໍ່ມີວຽກເຮັດງານທໍາ ບໍ່ມີລາຍຮັບຄົງທີ່ ເຊິ່ງເປັນສາເຫດໜຶ່ງທີ່ເຮັດໃຫ້ເກີດມີການຂີ້ລັກຢາງພາລາ.

*ຕ່າງໜ້າບໍລິສັດ Daklaoruco:*

ປະຈຸບັນ: ທາງບໍລິສັດແມ່ນບໍ່ມີຂໍ້ມູນທີ່ແນ່ນອນກ່ຽວກັບຢາງທີ່ຖືກລັກ, ຄາດຄະເນປະມານ 20-25% ປະລິມານຢາພາລາໃນໜຶ່ງປີ( ປະມານ 4.000 ໂຕນ). ທາງບໍລິສັດໄດ້ມີກອງປະຊຸມກ່ຽວກັບບັນຫານີ້ກັບພາກສ່ວນທີ່ກ່ຽວຂ້ອງຂອງເມືອງເລົ່າງາມ ແລະ ຄາດວ່າ 2024 ທາງບໍລິສັດຈະໄດ້ຈັດກອງປະຊຸມກັບເມືອງ ບາຈຽງ ແລະ ປະທຸມພອນ.

ທຸກໆແຈ້ງການປະກາດຮັບສະໝັກຂອງບໍລິສັດແມ່ນໄດ້ສົ່ງໄປທົ່ວເຖິງເປັນວົງກ້ວາງຮອດປະຊາຊົນໃນເຂດໂຄງການ. ໃນເວລາທີ່ປະຊົນຕ້ອງການວຽກເຮັດ, ສາມມາດຕິດຕໍ່ພົວພັນໂດຍກົງຢູ່ຫ້ອງການຂອງແຕ່ລະນິຄົມທີ່ໃກ້ພື້ນທີ່ດໍາລົງຊີວິດ.

- ໃນໄລຍະ 2024-2043, ສະເໜີໃຫ້ທາງບໍລິສັດຂຶ້ນແຜນຊັດເຈນກ່ຽວກັບເງິນເດືອນ ແລະ ສະຫວັດດີການສັງຄົມຂອງແຮງງານ.

*ຕ່າງໜ້າບໍລິສັດ Daklaoruco:*

ສໍາລັບເງິນເດືອນ: ທາງບໍລິສັດໄດ້ສ້າງແຜນຕາມແຕ່ລະປີ, ອີງໃສ່ຕາມລະບຽບກົດໝາຍ, ສະພາບເສດຖະກິດ, ການຜະລິດຂອງບໍລິສັດ. ທາງບໍລິສັດຮັບປະກັນວ່າເງິນເດືອນຂອງແຮງງານທີ່ໄດ້ຮັບແມ່ນສູງກວ່າເງິນເດືອນຂັ້ນຕໍ່າຂອງລະບຽບກົດໝາຍ, ຊ່ວຍສົ່ງເສີມຊີວິດການເປັນຢູ່ຂອງກໍາມະກອນໃຫ້ດີຂຶ້ນ.

ສໍາລັບສະຫວັດດີການສັງຄົມ: ກໍາມະກອນທີ່ເຮັດວຽກ 1 ປີຂຶ້ນໄປ ແມ່ນທາງບໍລິສັດຈະໄດ້ຊື້ປະກັນສັງຄົມ. ທາງບໍລິສັດຈະປະສານສົມທົບກັບຫ້ອງການປະກັນສັງຄົມເຜີຍແຜ່ ແລະ ຊ່ວຍເຫລືອບ່າງສວ່ນລາຍຈ່າຍເພື່ອເພີ່ມອັດຕາການເຂົ້າຮ່ວມປະກັນສັງຄົມຂອງກໍາມະກອນ. ທາງບໍລິສັດໄດ້ສ້າງເຮືອນພັກລວມໃຫ້ກໍາມະກອນຢູ່ທ້ອງຖິ່ນ, ຮັບປະກັນຊີວິດການເປັນຢູ່ຂອງກໍາມະກອນບໍລິສັດ.

- ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມທາງບວກ ແລະ ທາງລົບ. ໃນເວລາທີ່ບໍລິສັດ ນໍາໃຊ້ສານເຄມີປາບສັດຕູພືດສ້າງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ. ບັນຫາການແກ້ໄຂບໍາບັດສິ່ງເສດເຫລືອຕ້ອງໄດ້ຮັບເອົາໃຈໃສ່ແລະແກ້ໄຂ.

*ຕ່າງໜ້າບໍລິສັດ Daklaoruco:* ແຕ່ປີ 2024, ທາງບໍລິສັດສັນຍາວ່າຈະບໍ່ນໍາໃຊ້ຢາປາບສັດຕູພືດທີ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ. ບໍລິສັດ ຈະລວບລວມ, ບໍາບັດສິ່ງເສດເຫລືອຖືກຕ້ອງຕາມລະບຽບ, ບໍ່ຖິ້ມຂີ້ເຫຍື້ອສະຊາຍໃສ່ປ່າ ແລະ ສິ່ງແວດລ້ອມ. ຫວັງຢ່າງຍິ່ງວ່າອໍານາດການປົກຄອງທ້ອງຖິ່ນສົມທົບເຜີຍແຜ່ໃຫ້ຊຸມຊົນໃນບັນຫາການຖິ້ມຂີ້ເຫຍື້ອເພື່ອຮັກສາສິ່ງແວດລ້ອມ.

- ບໍລິສັດຕ້ອງມີແຜນການນໍາໃຊ້ດິນສໍາລັບເນື້ອທີ່ ໃນຂອບເຂດປົກປັກສາດິນລຽບຕາມແລວສາຍນໍ້າເຫັນວ່າປະຈຸບັນຍັງບໍ່ທັນມີຕົ້ນໄມ້ປູກ. ສໍາລັບດິນທີ່ເໝາະສົມ, ບໍລິສັດມີມາດຕະການແກ້ໄຂ, ປູກຕົ້ນໄມ້ປະເພດທີ່ເໝາະສົມ ແລະ ປ້ອງກັນເນື້ອທີ່ດິນບໍ ?.

*ຕ່າງໜ້າບໍລິສັດ Daklaoruco:* ທາງບໍລິສັດໄດ້ມີການໝາຍຫລັກແດນສໍາລັບເນື້ອທີ່ໃນຂອບເຂດປົກປັກສາດິນລຽບຕາມແລວສາຍນໍ້າ, ຄຸ້ມຄອງແລະປົກປັກຮັກສາ. ບໍລິສັດແມ່ນມີແຜນຈະປູກໄມ້ຍາງ.

- ໃນແຜນການພັດທະນາປ່າໄມ້ແບບຍືນຍົງໃນໄລຍະ 2024-2043, ທາງບໍລິສັດມີແຜນທີ່ຈະກ້າເບ້ຍໄມ້ທີ່ໃຊ້ງົບປະມານຫລາຍ. ສະເໜີໃຫ້ທາງບໍລິສັດອະທິບາຍໃຫ້ຊັດເຈນໃນເນື້ອໃນນີ້.

*ຕ່າງໜ້າບໍລິສັດ Daklaoruco:* ທາງບໍລິສັດແມ່ນມີແຜນກ້າເບ້ຍໄມ້ເພື່ອສະໜອງໃຫ້ແຜນການປູກປ່າທົດແທນໃນໄລຍະ 2024-2043, ຄ່າໃຊ້ຈ່າຍໃນແຕ່ລະປີສໍາລັບວຽກງານນີ້ແມ່ນຂຶ້ນຕາມແຜນການເງິນ ແລະ ການຜະລິດຂອງບໍລິສັດ.

**V. ບົດສະຫລຸບ.**

ກອງປະຊຸມປຶກສາຫາລືແມ່ນໄດ້ຜ່ານບົດລາຍງານຫົວຂໍ້ກ່ຽວກັບການສ້າງລະບົບແຜນທີ່ການຄຸ້ມຄອງດ້ວຍເຕັກ GIS, ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ - ສັງຄົມ ແລະ ແຜນການພັດທະນາປ່າໄມ້ແບບຍືນຍົງຂອງ Daklaoruco.

ໃນກອງປະຊຸມແມ່ນໄດ້ ມີ 11 ຫົວຂໍ້ຄໍາເຫັນທີ່ໄດ້ມີການສົນທະນາປຶກສາຫາລື, ບັນດາຄໍາເຫັນຕ່າງໆແມ່ນໄດ້ສຸມໃສ່ເນື້ອໃນການພັດທະນາປ່າແບບຍືນຍົງຂອງບໍລິສັດ Daklaoruco, ເຊິ່ງໃນນັ້ນແມ່ນການຊີແຈ່ງບາງບັນຫາໃຫ້ຊັດເຈນຄືດັ່ງນີ້: ເນື້ອທີ່ຕົວແບບຂອງລະບົບນິເວດ, ສະພາບ ແລະ ມາດຕະການປົກປັກຮັກສາຜະລິດຕະພັນຢາງພາລາ, ແຜນການຍົກສູງລາຍຮັບ, ປະຕິບັດນະໂຍບາຍປະກັນສັງຄົມ, ປະກັນສຸຂະພາບ, ສະຫວັດດີການຂອງຜູ້ອອກແຮງງານ, ແຜນການຊ່ວຍເຫລືອການກໍ່ສ້າງພື້ນຖານໃຫ້ເຂດທ້ອງຖິ່ນໃນເຂດໂຄງການ, ແຜນການ, ມາດຕະການກໍາຈັດຂີ້ເຫຍື້ອ, ຮັກສາສິ່ງແວດລ້ອມ,ຊ່ວຍເຫລືອການດໍາລົງຊີວິດໃນເຂດຊຸມຊົນ, ນອກຈາກນີ້ທາງບັນດາແຂກທີ່ເຂົ້າຮ່ວມຍັງໄດ້ປຶກສາຫາລືກ່ຽວກັບບັນຫາການມອບອາກອນໃຫ້ທ້ອງຖິ່ນ, ສ້ອມແປງທາງ ແລະ ປະກາດຮັບສະໝັກ …

ໂດຍລວມ, ເຫັນວ່າບັນດາຄໍາເຫັນຂອງຄະນະອໍານວຍການບໍລິສັດ ແລະ ຜູ້ຊ່ຽວຊານຂອງສະຖາບັນການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຢັ້ງຢືນປ່າໄມ້ຫວຽດນາມໄດ້ຮັບຟັງ ແລະ ຕອບຄໍາຖາມດ້ວຍວິທີການຢ່າງລະອຽດ, ບັນດາແຂກທີ່ເຂົ້າຮ່ວມກໍ່ຕົກລົງເຫັນດີສໍາລັບທຸກບັນຫາທີ່ໄດ້ສົນທະນາປຶກສາຫາລື.

ຜ່ານກອງປະຊຸມປຶກສາຫາລື, ແຜນການພັດທະນາປ່າໄມ້ແບບຍືນຍົງແມ່ນຈະໄດ້ມີການດັດແກ້ບາງເນື້ອໃນທີ່ສໍາຄັນດັ່ງນີ້:

(1) ກ່ຽວກັບຂໍ້ມູນ, ຜ່ານມາທາງສະພາບໍລິຫານໄດ້ອອກມະຕິຕົກລົງເລກທີ: 10, ວັນທີ 30/12/2023 ໄດ້ກຳນົດຊັດເຈນເນື້ອທີ່ການຄຸ້ມຄອງ ແລະ ຂັ້ນຕອນການສະສາງສວນຢາງພາລາຂອງບໍລິສັດ Daklaoruco ດັ່ງນັ້ນແຜນການຕ້ອງໄດ້ທົບທວນ, ດັດແກ້ຈາກຂໍ້ມູນໂຕຈິງຮອດການວາງແຜນໃນໄລຍະແຕ່ 2024-2054 ໃຫ້ເໝາະສົມກັບໄລຍະເວລາສຳປະທານດິນລະຫລວ່າງບໍລິສັດ ກັບ ລັດຖະບານລາວ.

(2) ກ່ຽວກັບໄລຍະຂອງແຜນການ, ໄດ້ແບ່ງອອກເປັນສອງຮອບວຽນເສດຖະກິດຂອງຕົ້ນຢາງພາລາ: ຮອບວຽນທີ 1: 2005-2025; ຮອບວຽນ 2: 2025-2054. (ຮອບວຽນນີ້ແມ່ນສຳພັນກັນ, ເພາະວ່າປີ 2025 ແມ່ນເລີ່ມຕົ້ນດຳເນີນການປູກຄືນຢາງພາລາຄືນໃໝ່). ສະນັ້ນແລ້ວ, ບັນດາເນື້ອໃນຕາມແຜນການຈະໄດ້ໄລ່ຕື່ມໄລຍະ 2044-2054, ຂອງທຸກໆເນື້ອໃນການວ່າງແຜນ ແລະ ແຜນການປະຕິບັດ.

(3) ສ້າງແຜນເພີ່ມເຕີມຢ່າງລະອຽດໃນການທົດແທນປ່າທຳມະຊາດຂອງເນື້ອທີ່ປ່າແບບຢ່າງຂອງລະບົບນິເວຢູ່ໃນເນື້ອທີ່ກຳລັງປູກຕົ້ນໝາກມ່ວງຫິມະພານ ແລະ ຕົ້ນກະຖິນນາໂລງຕາມມາດຕະຖານຂອງ FSC, ເຮັດລະອຽດກ່ຽວກັບສະຖານທີ່, ວິທີການທົດແທນປ່າທຳມະຊາດ, ປະເພດໄມ້ປູກເພີ່ມເຕີມຖ້າຫາກມີເງື່ອນໄຂຄົບຖ້ວນ, ຄວາມຄືບໜ້າຂອງເວລາ… ຕາມນັ້ນ, ໃນແຜນການຕິດຕາມ, ປະເມີນກໍ່ຕ້ອງໄດ້ເພີ່ມເຕີມເນື້ອໃນນີ້ເພື່ອສາມາດປະຕິບັດໃຫ້ມີປະສິດຕິພາບຕື່ມ.

(4) ກ່ຽວກັບການຈັດຕັ້ງປະຕິບັດ, ຕາມໜ້າທີ່ຮັບຜິດຊອບຈະຕ້ອງໄດ້ແຕ່ງຕັ້ງຕື່ມອີກ, ໜ້າທີ່ຮັບຜິດຊອບຂອງສະພາບໍລິຫານ, ຂອງຄະນະກວດສອບ, ບໍລິສັດ ຮຸ້ນສ່ວນການລົງທຶນຢາງພາລາດັກລັກ (DRI). ສຳລັບບັນດາຫ້ອງການຂອງ Daklaoruco ຕາມພາລະໜ້າທີ່, ມອບໃຫ້ບັນດາໜ່ວຍງານທົບທວນ, ດັດແກ້ ຫລື ອອກບັນຂໍ້ກຳນົດ, ກົດລະບຽບ ແລະ ຂັ້ນຕອນໃໝ່, ທີ່ຕິດພັນກັບການຄຸ້ມຄອງແຮງງານ, ເງິນເດືອນ, ການຍ້ອງຍໍ ລົງວິໄນ, ຈັດຕັ້ງພະນັກງານ, ການເງິນ, ເຕັກນິກ, ປຶກສາຫາລືກັບຊຸມຊົນ, ຄຸ້ມຄອງສິ່ງແວດລ້ອມ, ປົກປັກຮັກສາຜະລິດຕະພັນ, … ບັນດາຂໍ້ກຳນົດ, ລະບຽບການ, ຂັ້ນຕອນ, ແຜນການແຕ່ລະປີ ແລະ ການປະເມີນປະຕິບັດແຜນການແຕ່ລະປີຕ້ອງລະອຽດໂປ່ງໃສ …

ສຳລັບຜົນການປຶກສາຫາຫືໃນກອງປະຊຸມ, ທາງບໍລິສັດຈະເພີ່ມເຕີມແຜນການພັດທະນາປ່າໄມ້ແບບຍືນຍົງຂອງບໍລິສັດ Daklaoruco ໄລຍະ 2024-2054 ໃຫ້ສຳເລັດສົມບູນ ແລະ ຈະສ້າງພື້ນຖານການຈັດຕັ້ງປະຕິບັດທຸກໆການເຄືອນໄຫວການຄຸ້ມຄອງ ແລະ ທຸລະກິດປ່າໄມ້ຈົນຮອດໄລຍະເວລາສິ້ນສຸດການສຳປະທານດິນໃຫ້ມີປະສິດຕິຜົນສູງທີ່ສຸດທາງດ້ານເສດຖະກິດ, ສັງຄົມ ແລະ ສິງແວດລ້ອມ.

ບົນບັນທຶກກອງປະຊຸມປຶກສາຫາລືໄດ້ສຳເລັດໃນເວລາ 17h00 ໃນມື້ ແລະ ຕົກລົງເຫັນດີໃນທຸກໆເນື້ອໃນຂ້າງເທິງນີ້.

| ເລຂາກອງປະຊຸມ | ປະທານກອງປະຊຸມ |
|---|---|
| ຫ່ງຽນ ທິ ຫ້າຍ | ຫ່ງຽນ ວ່ຽດ ເຕື້ອງ |